Australian Government
Department of Health

BE COVIDSAFE

# ຫົກບາດກ້າວເພື່ອຢຸດຢັ້ງການແພ່ພາຍ ສໍາລັບບັນດາຄອບຄົວແລະຜູ້ມາຢ້ຽມຢາມ

ຂໍຂອບໃຈຕໍ່ບັນດາຄອບຄົວແລະຜູ້ທີ່ຮັກແພງຂອງຜູ້ສູງອາຍຸຄົນອອສເຕຣລຽນທຸກໆຄົນ ທີ່ໄດ້ໃຫ້ການອຸ້ມຊູແລະຄວາມຮ່ວມໄມ້ຮ່ວມມື. ສິ່ງເຫຼົ່ານີ້ສໍາລັບຫຼາຍທີ່ສຸດໃນຊ່ວງລະຍະຂອງຄວາມຫຍຸ້ງຍາກນີ້.

ພວກເຮົາຮູ້ວ່າ COVID-19 ມີຜົນກະທົບຢ່າງມາກມາຍເກີນຂີດຕໍ່ຜູ້ສູງອາຍຸ.  ພວກເຮົາກໍາລັງເຮັດວຽກໜັກຢ່າງບໍ່ເຄີຍມີມາກ່ອນເພື່ອໃຫ້ໝັ້ນໃຈວ່າຄົນທີ່ທ່ານຮັກແພງນັ້ນຈະໄດ້ຢູ່ຢ່າງປອດໄພຢູ່ໃນບ່ອນບໍລິການດູແລຜູ້ສູງອາຍຸຂອງເຂົາເຈົ້າ.

ຄວາມປອດໄພແລະຄວາມຢູ່ດີຂອງຜູ້ສູງອາຍຸຄົນອອສເຕຣລຽນທີ່ຢູ່ໃນສະພາບອ່ອນແອ ແມ່ນບູຣິມະສິດອັນສູງສຸດຂອງພວກເຮົາ.

ຂໍ້ມູນຂ້າງລຸ່ມນີ້ຈະຊ່ວຍປົກປ້ອງຜູ້ສູງອາຍຸຄົນອອສເຕຣລຽນໃຫ້ພົ້ນຈາກ COVID-19.

ຂໍ້ມູນເພີ່ມເຕີມມີໄວ້ໃຫ້ທີ່ເວັບໄຊ້ health.gov.au ພາຍໃຕ້ຫົວຂໍ້ “resources section”. ພວກເຮົາຂໍຊຸກຍູ້ໃຫ້ທ່ານເຂົ້າໄປອ່ານກົດອຸດສາຫະກໍາສໍາລັບລະບຽບການຢ້ຽມຢາມບ້ານພັກດູແລຜູ້ສູງອາຍຸໃນລະຫວ່າງການລະບາດຂອງ COVID-19 ທີ່ https://www.cota.org.au/policy/aged-care-reform/agedcarevisitors/.

ພວກເຮົາຕ້ອງສືບຕໍ່ປົກປ້ອງສິດທິຂອງຜູ້ທີ່ໄດ້ຮັບບໍລິການດູແລຜູ້ສູງອາຍຸ, ເຊິ່ງໃຫ້ສອດຄ່ອງກັບກົດລະບຽບດ້ານສິດທິກ່ຽວກັບບໍລິການດູແລຜູ້ສູງອາຍຸ. ທ່ານສາມາດເຂົ້າໄປເບິ່ງກົດລະບຽບນີ້ໄດ້ທີ່ https://www.health.gov.au/news/charter-of-aged-care-rights.

BE COVIDSAFE

# ຫົກບາດກ້າວເພື່ອຢຸດຢັ້ງການແພ່ພາຍພະຍາດ:

## ທ່ານສາມາດຢຸດຢັ້ງການແພ່ພາຍແລະຢູ່ຢ່າງປອດໄພ ໂດຍການປະຕິບັດຕາມທັງຫົມດຂອງຫົກບາດກ້າວ

### 1. ທ່ານຮູ້ສຶກສະບາຍດີຢູ່ບໍ?

ທ່ານຕ້ອງຢູ່ເຮືອນຖ້າທ່ານຮູ້ສຶກບໍ່ສະບາຍ, ເຖິງວ່າອາການຂອງທ່ານຈະມີພຽງເບົາບາງ. ໃຫ້ຕິດຕໍ່ຫາທ່ານຫມໍຫຼືຄລີນິກທາງເດີນຫາຍໃຈແລະຂໍຄໍາແນະນໍາ. ໃຫ້ບອກເຂົາເຈົ້າວ່າທ່ານເປັນພະນັກງານດູແລຜູ້ສູງອາຍຸ. ການກວດຫາ COVID-19 ມີໄວ້ໃຫ້ສໍາລັບພະນັກງານດູແລຜູ້ສູງອາຍຸທຸກໆຄົນ. ອາການຂອງ  COVID-19 ອາດຄ້າຍຄືກັບຫວັດຫຼືໄຂ້ຫວັດໃຫຍ່ແລະອາດລວມອາການຕ່າງໆດັ່ງນີ້:

- ເປັນໄຂ້
- ໄອ
- ຫາຍໃຈຝືດ
- ເຈັບຮູຄໍ
- ເຈັບຫົວ
- ບໍ່ໄດ້ກິ່ນ
- ບໍ່ຮູ້ຣົດຊາດ
- ຂີ້ມູກຍ້ອຍ
- ເຈັບຕາມກ້າມເນື້ອ
- ເຈັບຕາມຂໍ່
- ຖອກທ້ອງ
- ວິນຫົວ/ຮາກ
- ກິນເຂົ້າບໍ່ແຊບ

### 2. *ຢາສັກກັນຫວັດ* ຂອງທ່ານຍັງຢູ່ໃນກໍານົດຢູ່ບໍ?

ຖ້າທ່ານຢາກໄປຢ້ຽມຢາມສະຖານທີ່ດູແລຜູ້ສູງອາຍຸ ທ່ານຕ້ອງໄດ້ສັກຢາກັນຫວັດ. ທ່ານຕ້ອງໄດ້ສະເໜີຫຼັກຖານທີ່ສະແດງວ່າທ່ານໄດ້ສັກຢາກັນຫວັດທີ່ຍັງຢູ່ໃນກໍານົດ. ຖ້າທ່ານບໍ່ສາມາດສັກຢາໄດ້ທ່ານກໍຕ້ອງມີຫນັງສືຢັ້ງຢືນໃຫ້ຫຼີກເວັ້ນໄດ້ຈາກທ່ານຫມໍຂອງທ່ານ. ນອກນີ້ ພວກເຮົາກໍຍັງຂໍແນະນໍາໃຫ້ທ່ານສັກຢາກັນໄວ້ເຊັ່ນກັນຖ້າທ່ານຈະໄປຢາມຍາດຜູ້ສູງອາຍຸແລະຫມູ່ເພື່ອນທີ່ຢູ່ໃນເຮືອນເຂົາເຈົ້າເອງ.

### 3. ທ່ານຮູ້ບໍວ່າຈະເຮັດຢ່າງໃດຈຶ່ງຈະໃຫ້ການຢ້ຽມຢາມຂອງທ່ານປອດໄພເທົ່າທີ່ຈະທໍາໄດ້?

ເພື່ອຫຼຸດຜ່ອນຄວາມສ່ຽງໃນການແພ່ພາຍ COVID-19, ພວກເຮົາຂໍແນະນໍາໃຫ້ທ່ານ:

- ລ້າງມືດ້ວຍສະບູແລະນໍ້າຢ່າງນ້ອຍເປັນເວລາ 20ວິນາທີ ຫຼືໃຊ້ນໍ້າຢາຖູມືທີ່ມີເຊື້ອເຫຼົ້າ » ກ່ອນແລະຫຼັງການຢ້ຽມຢາມຂອງທ່ານ

» ກ່ອນແລະຫຼັງຈາກທີ່ທ່ານພົວພັນໃກ້ຊິດກັບຜູ້ອາໄສ, ເຊັ່ນຊ່ວຍປ້ອນເຂົ້າໃຫ້ເຂົາເຈົ້າ

BE COVIDSAFE

» ລ້າງມືເປັນລະຍະປະຈຳຕະຫຼອດວັນ

- ແຈ້ງຫຼັກຖານວ່າຕົວທ່ານແລະຜູ້ຢ້ຽມຢາມທຸກຄົນທີ່ມາກັບທ່ານໄດ້ສັກຢາກັນຫວັດປີ 2020
- ໄອຫຼືຈາມໜູບໃສ່ຂໍ້ສອກຫຼືໃສ່ເຈັ້ຍທິດຊູ, ໃຫ້ເອົາທິດຊູທີ່ໃຊ້ແລ້ວຖິ້ມລົງຖັງຂີ້ເຫຍື້ອທັນທີ, ແລະ ລ້າງມື
- ບໍ່ໃຫ້ມີຢ້ຽມຢາມເກີນສອງຄົນໃນແຕ່ລະຄັ້ງຕໍ່ຜູ້ອາໄສຜູ້ໜຶ່ງ
- ຢ້ຽມຢາມຍາດຂອງທ່ານຢູ່ໃນຫ້ອງຂອງເຂົາເຈົ້າ, ໃນເຂດນອກທີ່ໂລ່ງແຈ້ງ, ຫຼືເຂດທີ່ທາງສະຖານທີ ເພິ່ນຈັດໄວ້ໃຫ້
- ໃຫ້ຫຼີກເວັ້ນເຂດທີ່ມີຄົນໃຊ້ຮ່ວມກັນ
- ໃຫ້ປະຕິບັດການຢູ່ຫ່າງຈາກຄົນອື່ນທຸກຄັ້ງເທົ່າທີ່ເປັນໄປໄດ້

ທ່ານບໍ່ສາມາດໄປຢ້ຽມຢາມໄດ້ຖ້າວ່າພາຍໃນ 14 ມື້ຜ່ານມາ ທ່ານໄດ້:

- ກັບມາຈາກຕ່າງປະເທດ ຫຼື
- ໄດ້ພົວພັນໃຫ້ຊິດກັບໃຜຜູ້ໜຶ່ງທີ່ຕິດເຊື້ອ COVID-19

ທ່ານຄວນຢູ່ໃນລະຫວ່າງການກັກແຍກຕົວຫຼືແຍກດ່ຽວແລ້ວ ແລະ ຕ້ອງບໍ່ຢ້ຽມຢາມໃຜທັງໝົດ.

ພະນັກງານແລະຜູ້ຢ້ຽມຢາມທຸກຄົນຕ້ອງໄດ້ແຈ້ງລາຍລະອຽດເພື່ອການຕິດຕໍ່ຫາໃຫ້ທາງສະຖານທີ່ດູແລຜູ້ສູງອາຍຸ.

## 4. ທ່ານມີເດັກນ້ອຍມາຢ້ຽມນຳທ່ານບໍ?

ທ່ານຕ້ອງສອບຖາມເບິ່ງເສັຍກ່ອນວ່າເດັກນ້ອຍໄດ້ຮັບອະນຸຍາດໃຫ້ໄປຢ້ຽມຢາມນຳທ່ານບໍກ່ອນຈະໄປທີ່ RACF. ຖ້າວ່າເດັກນ້ອຍໄດ້ຮັບອະນຸຍາດ, ທ່ານຕ້ອງຄວບຄຸມເບິ່ງເດັກນ້ອຍທີ່ມານຳທ່ານແລະໃຫ້ໝັ້ນໃຈວ່າເຂົາເຈົ້າປະຕິບັດຕາມກົດລະບຽບການຢູ່ຫ່າງກັນແລະເຮັດຕາມຄຳແນະນຳເລື່ອງສຸຂະອະນາໄມ.

## 5. ທ່ານຮູ້ກົດລະບຽບທີ່ວາງໄວ້ຢູ່ສະຖານທີ່ຂອງຜູ້ທີ່ທ່ານຮັກແພງບໍ?

ທຸກສະຖານທີ່ບໍລິການໄດ້ຖືກຂໍໃຫ້ສື່ສານກັບບັນດາຜູ້ອາໄສແລະຄອບຄົວກ່ຽວກັບກົດລະບຽບໃນລະຫວ່າງຢ້ຽມຢາມ. ເຂົາເຈົ້າຕ້ອງແຈ້ງໃຫ້ທ່ານຮູ້ກ່ຽວກັບການປ່ຽນແປງໃດໆ. ທ່ານຈະຕ້ອງ:

- ໃຫ້ຄຳຕອບທີ່ຊື່ສັດຕໍ່ບັນດາຄຳຖາມກວດຂັນ ກ່ຽວກັບຄວາມສ່ຽງຕໍ່ COVID-19
- ແຈ້ງຫຼັກຖານວ່າທ່ານໄດ້ສັກຢາກັນຫວັດ ປີ 2020 ແລ້ວ
- ປະຕິບັດຕາມກົດລະບຽບຂອງຜູ້ມາຢ້ຽມຢາມ

ທ່ານຕ້ອງກວດເບິ່ງຄຳແນະນຳຈາກລັດຖະບານປະຈຳລັດແລະເຂດປົກຄອງພິເສດເພາະວ່າແຕ່ລະລັດກໍອາດມີເງື່ອນໄຂແຕກຕ່າງກັນໄປສຳລັບບໍລິການດູແລຜູ້ສູງອາຍຸແລະສາທາຣະນະ.

BE COVIDSAFE

## 6. ທ່ານຮູ້ບໍວ່າຈະຕິດຕໍ່ພົວພັນກັບຄົນທີ່ທ່ານຮັກແພງຢ່າງໃດຖ້າວ່າເພິ່ນມີການຫ້າມບໍ່ໃຫ້ເຂົ້າໄປຢ້ຽມຢາມ?

ບາງເທື່ອ ຜູ້ບໍລິການອາດຈໍາເປັນຕ້ອງໄດ້ຫ້າມບໍ່ໃຫ້ມີການຢ້ຽມຢາມ. ຍົກຕົວຢ່າງ, ຖ້າມີການແພ່ລະບາດຢູ່ໃນສະຖານທີ່ຫຼືໃນເຂດທ້ອງຖິ່ນ.

ເຮົາຂໍຊຸກຍູ້ໃຫ້ທາງພາກສ່ວນບໍລິການແລະຍາດພີ່ນ້ອງຈົ່ງເຮັດວຽກຮ່ວມກັນເພື່ອຊ່ວຍໃຫ້ທ່ານຍັງສາມາດຕິດຕໍ່ພົວພັນກັບຄົນທີ່ທ່ານຮັກແພງໄດ້.

ຖ້າທ່ານມີຄວາມເປັນຫ່ວງກ່ຽວກັບການຢ້ຽມຢາມຫຼືການດູແລໝູ່ເພື່ອນຫຼືຄົນໃນຄອບຄົວ, ຂໍໃຫ້ຕິດຕໍ່:

- ໜ່ວຍເຄືອຂ່າຍຮ້ອງຮຽນຕາງໜ້າຜູ້ສູງອາຍຸ (OPAN) ທີ່ເລກໂທ 1800 700 600 ຫຼື
- ເຂົ້າໄປເບິ່ງເວັບໄຊ້ຂອງເຂົາເຈົ້າທີ່ www.opan.com.au.

OPAN ສາມາດເຮັດວຽກຮ່ວມກັບທ່ານແລະທາງພາກສ່ວນບໍລິການດູແລຜູ້ສູງອາຍຸ. ບໍລິການນີ້ຟຣີແລະເກັບເປັນຄວາມລັບ. ຫຼືບໍ່ດັ່ງນັ້ນ, ທ່ານກໍສາມາດຕິດຕໍ່ຫາຄະນະກໍາມາທິການຄວບຄຸມຄຸນນະພາບແລະຄວາມປອດໄພດ້ານການດູແລຜູ້ສູງອາຍຸ (ACQSC) ທີ່ເລກໂທ 1800 951 822 ຫຼື ທີ່ agedcarequality.gov.au.

ຖ້າທ່ານມີຄວາມເປັນຫ່ວງໃດໆກ່ຽວກັບສຸຂະພາບຈິດຂອງໝູ່ເພື່ອນຫຼືຄົນໃນຄອບຄົວ ໃຫ້ໂທຫາສາຍອຸ້ມຊູຟຣີດ້ານ COVID-19 ສໍາລັບຜູ້ອາວຸໂສຄົນອອສເຕຣລຽນ ທີ່ເລກໂທ 1800 171 866.

## ພວກເຮົາຕ້ອງການຄວາມຊ່ວຍເຫຼືອຈາກທ່ານ

ແອັບ COVIDSafe ແມ່ນສິ່ງທີ່ຖືວ່າເປັນການສະໝັກໃຈຢ່າງເຕັມສ່ວນ. ການດາວໂຫຼດເອົາແອັບນີ້ຖືວ່າເປັນສິ່ງໜຶ່ງທີ່ທ່ານສາມາດເຮັດເພື່ອຊ່ວຍປົກປ້ອງຄອບຄົວ, ເພື່ອນຝູງແລະ ຊຸມຊົນຂອງທ່ານ. ທ່ານສາມາດຊ່ວຍຮັກສາຊີວິດຂອງຄົນອອສເຕຣລຽນຄົນອື່ນໆລວມທັງຜູ້ທີ່ທ່ານໃຫ້ການດູແລ. ຍິ່ງຄົນອອສເຕຣລຽນຕິດຕັ້ງແອັບ COVIDSafe ຫຼາຍປານໃດ, ພວກເຮົາກໍຈະສາມາດຄົ້ນພົບໄວຣັສໄດ້ໄວຂຶ້ນປານນັ້ນ.

**ສໍາລັບຂໍ້ມູນ, ແຫຼ່ງຂ່າວແລະຂໍ້ແນະນໍາຢ່າງເປັນທາງການ, ຂໍໃຫ້ເຂົ້າໄປເບິ່ງ www.health.gov.au**